Alert.seattle.gov/evacuation(ການຍົກຍ້າຍ)

**ຄວາມຈິງ:** ເຈົ້າໜ້າທີ່ໄດ້ອອກຄຳສັ່ງໃຫ້ຄົນຍົກຍ້າຍໃນບາງທ້ອງຖິ່ນ ໃນເມືອງຊີອາໂຕ້. ນີ້ແມ່ນໝາຍຄວາມວ່າທ່ານອາດໄດ້ຂໍຮ້ອງໃຫ້ອອກຈາກບໍລິເວນໃດນຶ່ງ ຫຼືໃຫ້ໄປບ່ອນທີ່ຈັດໄວ້ໃຫ້ທີ່ຫ່າງໄກຈາກອັນຕະລາຍໃນປັດຈຸບັນ.

**ສິ່ງທີ່ຕ້ອງເຮັດ:**

- ເມື່ອມີປະກາດໃຫ້ຍົກຍ້າຍ ທ່ານຕ້ອງຍົກຍ້າຍດ່ວນ. ໃຫ້ໄປຕາມເສັ້ນທາງທີ່ແນະນຳໃຫ້ທ່ານຕາມໃບແຈ້ງໃຫ້ໂຍກຍ້າຍ. ເສັ້ນທາງບາງສາຍຈະມີປ້າຍຕິດຕາມທົ່ນທາງແລະຮາຍເວ(ທາງຫຼວງ)ບ່ອນຕ່າງໆ.
- ຫ້າມໄປທາງລັດ ເພາະທາງນັ້ນອາດຖືກຕັນ.
- ໃຫ້ເອົາແຕ່ສິ່ງທີ່ຈຳເປັນໄປນຳເຊັ່ນ: ຢາ, ອາຫານພິເສດ, ເຄື່ອງໃຊ້ສ່ວນຕົວ, ເຄື່ອງໃຊ້ສຳລັບເດັກ, ເຄື່ອງນຸ່ງ, ເງິນ, ແລະ ເອກກະສານຕ່າງໆທີ່ສຳຄັນ.
- ທ່ານຕ້ອງປິດປະຕູ ປ່ອງຢ້ຽມເຮືອນໃຫ້ຄັກແນ່ກ່ອນອອກບ້ານ. ລັອກປ່ອງຢ້ຽມແລະປະຕູໃຫ້ດີ.
- ຖ້າເປັນໄປໄດ້ ໃຫ້ທ່ານຫາຄົນໃດຄົນນຶ່ງທີ່ຢູ່ນອກເຂດຍົກຍ້າຍໃຫ້ເບິ່ງແຍງສັດລ້ຽງຂອງທ່ານ. ເຂົາເຈົ້າອາດບໍ່ອະນຸຍາດໃຫ້ນຳສັດລ້ຽງເຂົ້າໄປໃນທີ່ພັກລີ້ພັຍ ແລະຫ້າມບໍ່ໃຫ້ມັນແລ່ນໄປແລ່ນມາໃນບ່ອນນັ້ນ.
- ຖ້າທ່ານບໍ່ມີຣົດໄປ ໃຫ້ທ່ານຂໍຄວາມຊ່ວຍເຫຼືອຈາກຄົນຂ້າງບ້ານ ຫຼື ໝູ່ເພື່ອນ. ຖ້າວ່າມີຈຸດຮັບ ໃຫ້ກວດເບິ່ງວ່າ ຈຸດນັ້ນພໍຍ່າງໄປຮອດບໍ່?.
- ຈົ່ງຕິດຕາມຂ່າວຄືບໜ້າກ່ຽວກັບຂໍ້ມູນສຸກເສີນທາງວິທຍຸ.
- **ຖ້າວ່າທ່ານຮູ້ຈັກຜູ້ໃດທີ່ບໍ່ເຂົ້າໃຈ ບໍ່ໄດ້ເບິ່ງ ຫຼືບໍ່ໄດ້ຍິນຂ່າວສານນີ້ ໃຫ້ທ່ານບອກເຂົາເຈົ້າຕໍ່.**

ລິ້ງທີ່ເປັນປໂຍດ:

http://www.ready.gov/evacuating-yourself-and-your-family